# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 19 ຕຸລາ 2008 (10-19-2008)

## ຄຣິສຕຽນທຸກຄົນມີບັນຫາເລື່ອງຄວາມບາບ:

**ຂໍ້ພຣະຄັມພີໃນບົດຮຽນ**: (ໂຣມ 7:9-25)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:** ທ່ານໂປໂລຍອມຮັບວ່າທ່ານຍັງຕໍ່ສູ້ກັບຄວາມບາບຂອງທ່ານຢູ່. ທ່ານໂປໂລໄດ້ຄົ້ນພົບວ່າ: ຜູ້ທີ່ເຊື່ອຕາມທັມມະຊາດຄວາມຜິດບາບທີ່ມີຢູ່ໃນຈິດໃຈຂອງເຂົາ ກໍຍັງມີຄວາມປາຖນາດີຢູ່ສເມີ, ຄວາມຈິງ, ໃນການຕໍ່ສູ້ຢູ່ນັ້ນທ່ານກໍມີຄວາມຊົມຊື່ນຍິນດີ, ເພາະທ່ານມີຄວາມປາຖນາທີ່ຈະເຮັດໃຫ້ຖືກຕ້ອງຕາມພຣະບັນຍັດຂອງພຣະເຈົ້າ, ດັ່ງນັ້ນທ່ານຈຶ່ງມີຄວາມຮູ້ສຶກວ່າ ທ່ານໄດ້ຢູ່ໃນການຕໍ່ສູ້ກັບຕົນເອງຢູ່.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:** ມີຄຣິສຕຽນຈຳນວນຫລາຍ, ທີ່ຍັງບໍ່ຍອມຮັບວ່າພວກເຂົາຍັງຕໍ່ສູ້ກັບຄວາມບາບ. ມີຈຳນວນນຶ່ງທີ່ຍັງບໍ່ຍອມຮັບຄວາມອ່ອນແອຂອງຕົນ. ບົດຮຽນນີ້ໄດ້ຊີ້ບອກ ຫລືເປັນໂອກາດສຳລັບທຸກຄົນທີ່ເຊື່ອ ແລະຍອມຮັບວ່າເຂົາຍັງສືບຕໍ່ການຕໍ່ສູ້ກັບຄວາມບາບນີ້ຢູ່. ຄຣິສຕຽນອີກພາກສ່ວນນຶ່ງແມ່ນຄວາມບາບຍັງອາສັຍຢູ່ໃນຕົວຂອງເຂົາ ແລະກໍທຳໃຫ້ຂັດຂວາງວຽກງານຂອງພຣະເຈົ້າ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:** ຄືໄດ້ເປີດໂອກາດໃຫ້ທ່ານສາຣະພາບໃນການດີ້ນຣົນຕໍ່ສູ້ກັບການກະທຳຄວາມຜິດບາບຂອງທ່ານ ແລະເພື່ອໃຫ້ໄດ້ມີໂອກາດອ້ອນວອນທູນຂໍຕໍ່ອົງພຣະຜູ້ເປັນເຈົ້າເຂົ້າມາຊ່ອຍລຶບລ້າງຄວາມຜິດບາບອອກຈາກຕົວທ່ານ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:** ໃຫ້ນັກຮຽນຄົນນຶ່ງອາສາສມັກເປີດຝາໂຖແກ້ວຂນົມເພື່ອເອົາຂນົມຢູ່ໃນແກ້ວນັ້ນ, ແຕ່ບໍ່ຕ້ອງບອກວ່າຝານັ້ນມີຢາງກາວຕິດຝາປິດໄວ້, ໃນເມື່ອຜູ້ນີ້ເປີດບໍ່ໄດ້ ກໍໃຫ້ຜູ້ອື່ນລອງເປີດເບິ່ງ, ຫລັງຈາກທັງສອງລອງເປີດແລ້ວບອກໃຫ້ເຂົາເຈົ້າຮູ້ວ່າຝາໂຖແກ້ວຂນົມນັ້ນມີຢາງກາວຕິດໄວ້ທາງໃນ ຊຶ່ງຊີ້ໃຫ້ເຫັນວ່າ ບາງຄັ້ງພວກເຮົາກໍບໍ່ສາມາດມອງເຫັນບັນຫາອັນແທ້ຈິງ. ຄວາມບາບນັ້ນກໍເຊັ່ນດຽວກັນມັນສາມາດລີ້ຊ່ອນຕິດຢູ່ທາງໃນເໝືອນດັ່ງຢາງກາວຕິດຢູ່ໃນໂຖແກ້ວຂນົມນັ້ນ.

1. **ການບໍ່ຮູ້ເຮັດໃຫ້ສະບາຍໃຈ:** (ໂຣມ 7:9-11)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 7:9-11
- ຂໍ້ຄວນຄິດນັ້ນກໍຄື (ເດັກນ້ອຍເກີດໃໝ່, ຄວາມຫຍຸ້ງຍາກໃນຄອບຄົວ, ແລະອື່ນ ໆ ).
- ອັຄສາວົກໂປໂລກໍເຊັ່ນດຽວກັນທ່ານໄດ້ຕໍ່ສູ້ກັບຄວາມບາບທາງຝ່າຍເນື້ອໜັງໃນຕົວຂອງທ່ານ.
- ຈັດຕັ້ງນັກຮຽນເປັນສອງກຸ່ມ, ເຈັ້ຽ ແລະມາກເກີໃຫ້ແຕ່ລະກຸ່ມ. ກຸ່ມນຶ່ງໃຫ້ເຮັດລີສແນວທາງຂອງຄົນທີ່ຫລອກລວງຄົນອື່ນ. ກຸ່ມທີສອງໃຫ້ເຮັດລີສແນວທາງຂອງຄົນທີ່ຫລອກລວງຕົນເອງ, ໃຫ້ເວລາປະມານ ຫ້າ ຫາ ແປດນາທີ, ແລ້ວໃຫ້ແຕ່ລະກຸ່ມນຳເອົາລີສທີ່ໄດ້ເຮັດນັ້ນມາປຽບທຽບແນວທາງຂອງຄົນທີ່ຫລອກລວງໃສ່ກັນວ່າມີທາງໃດແດ່. ( List )

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (ໂຣມ 7:9-11)

1. ທ່ານເຄີຍໄດ້ຖືກຄົນອື່ນຫລອກລວງບໍ່?
2. ລັກສະນະທ່າທີທີ່ເຂົາເຮັດໃຫ້ທ່ານໄດ້ຫລົງເຊື່ອນັ້ນແມ່ນຫຍັງແດ່?
3. ຄຣິສຕຽນທັງຫລາຍໄດ້ຖືກຫລອກລວງໂດຍຄວາມບາບແນວໃດແດ່?
4. ເປັນດ້ວຍເຫດໃດຄົນດີຈຶ່ງບໍ່ຢາກເຫັນຄວາມບາບຂອງເຂົາ ແລະເຂົາວ່າເຂົາບໍ່ຕ້ອງການພຣະຄຣິດ?
5. ຖ້າທ່ານປຽບທຽບສິ່ງທີ່ດີໃນເຣື່ອງສ່ວນຕົວຂອງທ່ານເອງກັບອຸປນິສັຍຊົ່ວແລ້ວວ່າ: ອັນໃດຫລາຍ?

2. **ແມ່ນບຫຍັງຄືບັນຫາ?:** (ໂຣມ 7:12-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 7:12-13
- ສເນີເຖິງຈຸດປະສົງຂອງຜູ້ທີ່ໃສ່ໜ້າກາກ ແລະຈຸດປະສົງຄວາມແຕກຕ່າງຂອງໜ້າກາກວ່າ ທັມມຊາດຂອງຄວາມບາບນັ້ນໄດ້ປິດບັງພວກເຮົາໄວ້ເພື່ອໃຫ້ພວກເຮົາຕອບສນອງຕໍ່ຄວາມຜິດບາບ. ຖ້າພວກເຮົາເຄີຍໄດ້ເບິ່ງທີວີເຣື່ອງການຕໍ່ສູ້ພ້ອງລ້ອງກັນ ເຮົາຈະຮູ້ໄດ້ວ່າ ບາງເທື່ອພວກເຮົາກໍບໍ່ສາມາດທີ່ຈະເຫັນດ້ວຍຕາເປົ່າ ແລະເຣື່ອງນັ້ນກໍບໍ່ສຳຄັນ ບໍ່ເປັນປໂຍດ, ເປັນແສງສວ່າງກໍບໍ່ໄດ້.
- ທ່ານໂປໂລໄດ້ຍົກກົດບັນຍັດຂຶ້ນມາອະທິບາຍກໍເພາະວ່າ ກົດບັນຍັດນີ້ໄດ້ມາຈາດອົງພຣະຜູ້ເປັນເຈົ້າ, ຊຶ່ງເປັນສິ່ງທີ່ດີບໍ່ແມ່ນເປັນສິ່ງຊົ່ວຮ້າຍ. ທ່ານໂປໂລໄດ້ຊີ້ໃຫ້ເຫັນຢ່າງຊັດເຈນໃນເຣື່ອງຂອງກົດບັນຍັດທີ່ໄດ້ໃຫ້ໄວ້ກັບໄພ່ພົນຂອງພຣະເຈົ້າ ເພື່ອໃຫ້ຜູ້ທີ່ຕິດຕາມພຣະເຈົ້າດຳຣົງຊີວິດຢ່າງຖືກຕ້ອງຕາມກົດບັນຍັດ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ໂຣມ 7:12-13

1. ຖ້າບໍ່ມີຜູ້ໃດເຫັນວ່າເຮົາໄດ້ເຮັດຜິດ (ລ່ວງລະເມີດ) ກົດບັນຍັດ, ພວກເຮົາຍັງເປັນຜູ້ທີ່ຜິດບາບຢູ່ບໍ່?
2. ສິ່ງທີ່ພວກເຮົາຄິດວ່າດີນັ້ນໄດ້ກັບກາຍມາເປັນສິ່ງຊົ່ວຮ້າຍແກ່ພວກເຮົາແນວໃດ?
3. ເປັນດ້ວຍເຫດໃດຄົນເຮົາຈຶ່ງຕົກໄປຢູ່ໃນບ້ວງແຮ້ວຂອງຄວາມບາບໄດ້ຢ່າງງ່າຍດາຍ?
4. ພວກເຮົາຈະອອກຈາກບ້ວງແຮ້ວຂອງຄວາມຜິດບາບໄດ້ແນວໃດ?
5. ພວກເຮົາສາມາດເຊື່ອງຄວາມຜິດບາບຂອງພວກເຮົາເພື່ອບໍ່ໃຫ້ຄົນອື່ນເຫັນໄດ້ບໍ່?
6. ຄວາມບາບເປັນສິ່ງທີ່ພວກເຮົາຫລີກໜີບໍ່ໄດ້ແລ້ວ, ເປັນຫຍັງພຣະເຈົ້າຈຶ່ງສາມາດເອົາເຮົາອອກໄດ້? ໂດຍໃນທາງໃດ?

3. **<u>ການຕໍ່ສູ້ດ້ານຈິດວິນຍານ:</u>** (ໂຣມ 7:14-25)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຄະລາເຕັຽ 5:19-21
- ພວກເຮົາມີຄວາມຜູກພັນກັບຄວາມບາບເຫລົ່ານີ້ບໍ່? ໃຫ້ຜູ້ນຶ່ງອາສາສມັກອ່ານພຣະທັມ ໂຣມ 7:14-17. ທ່ານໂປໂລເວົ້າວ່າ ຄວາມບາບໄດ້ຝັງຢູ່ໃນຮ່າງກາຍຂອງລາວນັ້ນທ່ານໄດ້ໝາຍຄວາມວ່າແນວໃດ?
- ທ່ານໂປໂລແມ່ນຄຣິສຕຽນທີ່ດີເລີດທີ່ສຸດບໍ່? ເປັນຫຍັງຈຶ່ງວ່າແມ່ນ? ຫລືວ່າບໍ່ແມ່ນ?
- ຜູ້ທີ່ຮັບເອົາພຣະເຢຊູຄຣິດຈະບໍ່ສາມາດຫລີກພົ້ນຈາກບາບດ້ວຍພລັງຂອງຕົນເອງໄດ້, ແຕ່ຜ່ານທາງພລັງຣິດອຳນາດຂອງພຣະບຸດ ພຣະວິນຍານບໍຣິສຸດຂອງພຣະເຈົ້າເປັນຜູ້ຈັດການກັບຄວາມບາບທັງໝົດ.
- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຣມ 7:18-20 ຄວາມບາບໄດ້ສນັບສນູນໃຫ້ພວກເຮົາເຮັດໃນສິ່ງທີ່ພວກເຮົາບໍ່ຢາດເຮັດແນວໃດແດ່?
- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຣມ 7:21-25 ການຕໍ່ສູ້ທາງຝ່າຍວິນຍານຢູ່ທີ່ໃດ? ທີ່ຕົວເຮົາເອງບໍ່? ທ່ານໂປໂລເວົ້າວ່າ ເລີ້ມຕົ້ນທີ່ຄວາມຄິດ ແລະຈິດໃຈຂອງພວກເຮົາ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ໂຣມ 7:14-25

1. ກົດບັນຍັດແຫ່ງຈິດວິນຍານຄືແນວໃດ?
2. ຕາມຄວາມຄິດຂອງທ່ານວ່າ ທ່ານໂປໂລໄດ້ຈັດການກັບທັມມະຊາດເນື້ອໜັງຂອງລາວເອງແນວໃດ?
3. ເປັນດ້ວຍເຫດໃດພຣະເຈົ້າຈຶ່ງອະນຸຍາດໃຫ້ຄວາມບາບດຳເນີນກິຈການຢູ່ໃນໂລກນີ້?
4. ຄຣິສຕຽນຄວນຈະສ້າງຄວາມຕ້ານທານເພື່ອຕ້ານອຳນາດຂອງງຄວາມບາບໄດ້ແນວໃດ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ມີແຕ່ກົດບັນຍັດຂອງພຣະເຈົ້າເທົ່ານັ້ນທີ່ຈະເຮັດໃຫ້ພວກເຮົາເຂົ້າໃຈເຖິງຄວາມຮ້າຍແຮງຂອງບາບ.
- ແມ່ນຫຍັງທີ່ເປັນບັນຫາຕົວສຳຄັນຂອງບັນດາຜູ້ທີ່ເຊື່ອທັງຫລາຍ? ມັນແມ່ນຄວາມບາບນັ້ນບໍ່?
- ສຸດທ້າຍພວກເຮົາຈະໄດ້ຊັຍຊະນະຄວາມບາບອັນໃຫຍ່ຫລວງໂດຍຜ່ານທາງພຣະພຣະຄຣິດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**